ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມທາບທາມຄຳເຫັນເປີດກວ້າງ ຕໍ່ຮ່າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ




ໃນວັນທີ 03 ເມສາ 2026, ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມ ທາບທາມຄຳເຫັນ ເປີດກວ້າງ ຕໍ່ຮ່າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ ໂດຍການເປັນປະທານ ຂອງທ່ານ ສຸລິສັກ ທຳນຸວົງ, ຮອງ ຜູ້ວ່າການ ທຫລ, ມີຜູ້ຕາງໜ້າຈາກ ກະຊວງ, ອົງການ, ອົງການລັດທຽບເທົ່າກະຊວງ, ສະມາຄົມທະນາຄານທຸລະ ກິດ, ສະມາຄົມການເງິນຈຸລະພາກລາວ, ສະມາຄົມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ສະຖາບັນການເງິນ ແລະ ສຳນັກງານປົກປ້ອງເງິນຝາກ ເຂົ້າຮ່ວມຫຼາຍກວ່າ 80 ທ່ານ.

ການຈັດກອງປະຊຸມຄັ້ງນີ້ ເພື່ອຍົກລະດັບຈາກ ດຳລັດ ຂຶ້ນເປັນ ກົດໝາຍວ່າດ້ວຍການປົກປ້ອງເງິນຝາກ ແນໃສ່ການຍົກລະດັບພາລະບົດບາດຂອງ ສຳນັກງານປົກປ້ອງເງິນຝາກ ຈາກການເປັນພຽງຜູ້ຈ່າຍເງິນປົກປ້ອງ (Paybox) ໃຫ້ກາຍເປັນຜູ້ທີ່ມີອຳນາດເພີ່ມເຕີມໃນການແກ້ໄຂບັນຫາສະຖາບັນການເງິນ (Paybox Plus) ຕາມ ມາດຕະຖານສາກົນ ໂດຍອີງໃສ່ຫຼັກການສຳຄັນ ຂອງລະບົບປະກັນໄພເງິນຝາກ ທີ່ມີປະສິດທິຜົນ ຂອງສະມາຄົມ ປະກັນໄພເງິນຝາກສາກົນ (IADI Core Principles for Effective Deposit Insurance Systems) ທີ່ ໄດ້ມີການປັບປຸງໃໝ່ໃນປີ 2025.

ການສ້າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ ໄດ້ເລີ່ມດຳເນີນແຕ່ທ້າຍປີ 2024 ເປັນຕົ້ນມາ ດ້ວຍການ ແຕ່ງຕັ້ງຄະນະຮັບຜິດຊອບ ຈາກ ທຫລ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍໄດ້ດຳເນີນຕາມຂັ້ນຕອນຂອງກົດໝາຍວ່າ ດ້ວຍການສ້າງນິຕິກຳ ເປັນຕົ້ນ: ໄດ້ກຳນົດທິດທາງໃນການປັບປຸງກົດໝາຍ, ສຶກສາຄົ້ນຄວ້ານິຕິກຳທີ່ຕິດພັນ, ສົມ ທຽບກັບພຶດຕິກຳຕົວຈິງ ແລະ ບົດຮຽນຂອງປະເທດອ້ອມຂ້າງ ເຊັ່ນ: ສສ ຫວຽດນາມ, ມາເລເຊຍ, ອິນໂດເນເຊຍ,

ຈີນ, ສ. ເກົາຫຼີ, ຟີລິບປິນ ແລະ ໄທ ໂດຍລົງເລິກຄົ້ນຄວ້າກ່ຽວກັບ ທີ່ຕັ້ງ ແລະ ພາບົດບາດຂອງ ສຳນັກງານປົກປ້ອງ ເງິນຝາກ, ປະເພດເງິນຝາກ ທີ່ໄດ້ຮັບການປົກປ້ອງ, ຜູ້ຝາກເງິນ ທີ່ໄດ້ຮັບການປົກປ້ອງ, ເງິນຝາກທີ່ບໍ່ໄດ້ຮັບການປົກ ປ້ອງ, ການກຳນົດອັດຕາເບ້ຍປະກັນເງິນຝາກ, ຂອບເວລາໃນການຈ່າຍເງິນປົກປ້ອງ, ການກຳນົດວົງເງິນປົກປ້ອງ, ສະມາຊິກ ຂອງສຳນັກງານປົກປ້ອງເງິນຝາກ ແລະ ຄັງປົກປ້ອງເງິນຝາກ, ການຄຸ້ມຄອງ ແລະ ການກວດກາວຽກງານ ປົກປ້ອງເງິນຝາກ.



ກອງປະຊຸມດັ່ງກ່າວ ໄດ້ດຳເນີນເປັນເວລາເຄິ່ງວັນ, ຜູ້ເຂົ້າຮ່ວມໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.




**ຂ່າວ-ພາບ: ຫ້ອງການ ທຫລ**

ຢູ່ເມືອງລາວໃຊ້ເງິນກີບລາວ